# ກອງທຶນຫຼຸດຜ່ອນຄວາມທຸກຍາກ
# ຈົດໝາຍຂ່າວ

ປະຈຳໄຕມາດ

ຕຸລາ - ທັນວາ
2021

**ມາຈາກຄວາມຕ້ອງການຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ**

## ສາລະບານ


ຄອບຄົວຕົວແບບໃນການສ້າງລາຍຮັບ
ໜ້າທີ 1-2

ສະຫຼຸບຕີລາຄາຜົນການລົງຕິດຕາມປະເມີນຜົນການຈັດຕັ້ງປະຕິບັດໂຄງການ ກອງທຶນຫຼຸດຜອນຄວາມທຸກຍາກ, ກະຊວງກະສິກຳ ແລະ ປ່າໄມ້ ຂອງຄະນະຊ່ຽວຊານທະນາຄານໂລກ
ໜ້າທີ 3 -5

ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງຢູ່ 6 ແຂວງ
ໜ້າທີ 6

ຄວາມເປັນເຈົ້າການ ຂອງກຸ່ມໂພຊະນາການ (ກພກ) ບ້ານຂວາງຄຳ, ເມືອງນາໝໍ້
ໜ້າທີ 7

23 ບ້ານເປົ້າຫມາຍຂອງ ທລຍ ເມືອງຊຳໃຕ້ ໄດ້ຮັບເງິນຕົ້ນທຶນໝູນວຽນ 1 ຕື້ກວ່າກີບ
ໜ້າທີ 8

**ສະມາຊິກ ກຸ່ມຊ່ວຍເຫຼືອກັນ (ກຊກ) ບ້ານກໍ້ໄຮ ໄດ້ຮັບການຝຶກອົບຮົມເຕັກນິກການລ້ຽງໝູລາດ**
ໜ້າທີ 9

ການກໍ່ສ້າງໂຮງຮຽນອະນຸບານບ້ານຫາດພອນ ສຳເລັດແລວ 40%
ໜ້າທີ 10

**ການກໍ່ສ້າງໂຮງຮຽນປະຖົມ2ຫ້ອງບ້ານນ້ຳຈີລີ, ກຸ່ມບານນ້ຳແພສຳເລັດແລ້ວ 10%**
ໜ້າທີ 11




## ຄອບຄົວຕົວແບບໃນການສ້າງລາຍຮັບ

ໂດຍ: ພູນຕາວັນ ອິນທຽມວົງ, ຫົວໜ້າ ທລຍ ເມືອງຫົວເມືອງ-ເມືອງຊ່ອນ

ຄອບຄົວ ທ່ານ ບຸນທະວີ ແມ່ນຄອບຄົວໜຶ່ງທີ່ອາໃສຢູ່ບ້ານ ຮົມກອງ, ເມືອງຫົວເມືອງ, ແຂວງຫົວພັນ ຄອບຄົວຂອງລາວມີສະມາຊິກ ທັງໝົດ 6 ຄົນ, ຍິງ 2 ຄົນ, ມີແຮງງານຕົ້ນຕໍ 3 ແຮງງານ, ແຮງງານສຳຮອງມີ 2 ແຮງງານ. ທ່ານ ບຸນທະວີ ໄດ້ເຂົ້າເປັນສາມາຊິກກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ແຕ່ປີ 2017 ແລະ ໄດ້ຮັບການຝຶກອົບຮົມເຕັກນິກ-ວິຊາການລ້ຽງໝູຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍການສະໜັບສະໜູນທຶນຈາກກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ).

ພາຍຫຼັງໄດ້ຮັບຄວາມຮູ້ຈາກການຝຶກອົບຮົມຄັ້ງນັ້ນ, ທ່ານບຸນທະວີໄດ້ສັກຢາວັກຊີນປ້ອງກັນພະຍາດໃຫ້ສັດລ້ຽງຂອງຜູ້ກ່ຽວໃນແຕ່ລະປີຕາມການແນະນຳຈາກວິຊາການ ເຮັດໃຫ້ລາວໄດ້ມີຄວາມຊຳນິຊຳນານ. ໃນຄັ້ງທຳອິດ, ລາວໄດ້ກູ້ຢືມເງິນຈາກກອງທຶນ ກຊກ ບ້ານ ໃນງວດທຳອິດ 1 ລ້ານ ກີບ ໂດຍເອົາມາສົມທົບໃສ່ເງິນທີ່ມີໃນຄອບຄົວຈຳນວນໜຶ່ງ ແລະ ໄດ້ລົງທຶນໃສ່ກິດຈະກຳລ້ຽງໝູ.



ໃນທຶນກູ້ຢືມຈຳນວນດັ່ງກ່າວ, ລາວໄດ້ຊື້ໝູແມ່ພັນຈຳນວນ 5 ໂຕມາລ້ຽງຊຶ່ງໃຊ້ໄລຍະເວລາໜຶ່ງປີ, ລາວສາມາດຂາຍໝູນ້ອຍທັງໝົດ 30 ໂຕ, ຊຶ່ງສ້າງລາຍຮັບໄດ້ ຈຳນວນ 10 ລ້ານກ່ວາກີບ. ທ່ານ ບຸທະວີ ໄດ້ສົ່ງຕົ້ນທຶນຄືນພ້ອມດອກເບ້ຍໃຫ້ກອງທຶນ ກຊກ ບ້ານ ຈຳນວນທັງໝົດ 1.120.000 ລ້ານ ກີບ, ລາວຍັງມີເງິນເຫຼືອ ຈາກການສົ່ງທຶນຄືນນັ້ນ ໄດ້ໄປຊື້ງົວໄດ້ 2 ແມ່ ເປັນເງິນຈຳນວນ 8 ລ້ານກີບ. ພິເສດໄປກວ່ານັ້ນ, ລາວຍັງເຫຼືອໝູແມ່ພັນຈຳນວນ 5 ແມ່ເພື່ອສືບຕໍ່ລ້ຽງ ແລະ ຂະຫຍາຍ. ນີ້ສະແດງໃຫ້ເຫັນວ່າ ການລ້ຽງໝູມີກຳໄລຂອງທ່ານ ບຸນທະວີ ສ້າງກຳໄລ ແລະ ມີລາຍຮັບດີຂຶ້ນ, ສະນັ້ນ ລາວຈຶ່ງຕັດສິນໃຈຢືມເງິນນຳກອງທຶນ ກຊກ ບ້ານຕື່ມອີກໃນຮອບວຽນທີ 2 ເປັນຈຳນວນເງິນ 2 ລ້ານ ເພື່ອໄປຊື້ໝູແມ່ພັນມາເພີ່ມ 2 ແມ່,ຊຶ່ງເປັນມູນຄ່າ 2 ລ້ານກີບ. ຜ່ານການລ້ຽງເປັນເວລາໜຶ່ງປີ (ປີທີ 2 ໃນຮອບວຽນທີ 2), ຈຳນວນໝູແມ່ພັນ 7 ໂຕ ໄດ້ເກີດໝູນ້ອຍໄດ້ 46 ໂຕ ແລະ ພາຍຫຼັງ ໝູນ້ອຍປະມົນ, ລາວໄດ້ຂາຍໝູນ້ອຍຈຳນວນດັ່ງກ່າວ ເປັນເງິນຈຳນວນ 16.000.000 ກີບ ພ້ອມທັງສົ່ງເງິນຕົ້ນທຶນ ແລະ ດອກເບ້ຍ ຈຳນວນ 2.240.000 ກີບ. ໃນຮອບວຽນທີ່ 3, ທ່ານ ບຸນທະວີ ໄດ້ຕັດສິນໃຈຢືມເງິນຈາກກອງທຶນ ກຊກ ບ້ານ ຈຳນວນ 3 ລ້ານກີບ ເພື່ອໄປຊື້ໝູມາເພີ່ມຕື່ມ 3 ແມ່ ເປັນມູນຄ່າ 3 ລ້ານກີບ, ຜ່ານການລ້ຽງໃນໄລຍະເທົ່າກັນ, ໝູແມ່ພັນ 7 ແມ່ ໄດ້ເກີດລູກໝູ ຈຳນວນ 63 ໂຕ ແລ້ວລາວໄດ້ຂາຍໝູນ້ອຍ ອອກເປັນຈຳນວນເງິນ 22.000.000 ກີບ ແລະ ໄດ້ຊຳລະທຶນກູ້ ຄັ້ງທີ່ 3 ລວມທັງດອກເບ້ຍ ຈຳນວນ 3.360.000 ກີບ. ທ່ານ ບຸນທະວີ ໄດ້ຂະຫຍາຍກິດຈະກຳການລ້ຽງໝູຈາກຈຳນວນໝູ ແມ່ພັນ 7 ໂຕ ເພື່ອຜະລິດແມ່ພັນ ແລະ ຂາຍລູກໝູ ໃນຮອບວຽນທີ 4 ແລະ 5 ຊຶ່ງສາມາດສ້າງລາຍຮັບໄດ້ຈຳນວນເງິນ 28 ລ້ານກີບ ໃນປີທີ 4 ແລະ ໃນປີທີ 5 ໄດ້ເງິນຈາກຂາຍໝູແມ່ພັນ ແລະ ໝູນ້ອຍທັງໝົດ 76 ລ້ານກີບ. ຈາກການຜົນສຳເລັດໃນການລ້ຽງໝູ, ທ່ານບຸນທະວີ ນຳໃຊ້ທຶນສ່ວນຕົວສົມທົບກັບເງິນກູ້ຈາກກອງທຶນ ກຊກ ລົງທຶນໃສ່ກິດກຳລ້ຽງສັດປີກ, ລ້ຽງແບ້, ລ້ຽງປາ, ລ້ຽງໝູ, ປູກຜັກສວນຄົວ ແລະ ລ້ຽງງົວ-ຄວາຍ ລວມທັງເຮັດສວນຫຍ້າລ້ຽງສັດ ເພື່ອໄວ້ໃຫ້ສັດກິນ.

ປະຈຸບັນທ່ານ ບຸນທະວີ ມີສັດປີປະມານ 85 ໂຕ, ແບ້ 6 ໂຕ, ໝູ 13 ໂຕ, ງົວ 22 ໂຕ, ຈົກໜອງປາໄດ້ 1 ໜອງ ສາມາດປ່ອຍປາໄດ້ 2-3 ພັນໂຕ, ເຮັດສວນຫຍ້າໄດ້ 1 ແຫ່ງ ໃນເນື້ອທີ່ ປະມານ 3 ເຮັກຕາ. ເຫັນວ່າສະຖານທີ່ລ້ຽງສັດມີຝຸ່ນຈຳນວນຫຼາຍ ແລະ ມີນ້ຳພຽງພໍ ຈຶ່ງລົງທຶນຊື້ຕາໜ່າງເຫລັກມາອ້ອມຮົ້ມ ເພື່ອເຮັດສວນປູກຜັກ 1 ແຫ່ງ ໃນເນື້ອທີ່ 500 ຕາແມັດ ລວມການລົງທຶນໃນຮອບວຽນທີ່ 5 ມີມູນຄ່າປະມານ 16 ລ້ານກ່ວາກີບ, ໃນຮອບວຽນທີ 5 ນີ້ລາວ ຄາດວ່າ ຈະສາມາດສ້າງລາຍຮັບໃຫ້ແກ່ຄອບຄົວປະມານ 50 ລ້ານກ່ວາກີບ, ຖ້າເອົາລາຍຮັບມາລົບລາຍຈ່າຍ ເຫັນວ່າ ຍັງມີເງິນເຫຼືອ 30 ລ້ານກ່ວາ ກີບ, ມີເງິນສາມາດສົ່ງລູກຮຽນ, ມີເງິນແຮໄວ້ປິ່ນປົວເວລາເຈັບເປັນ ແລະ ຍັງມີສັດລ້ຽງໄວ້ເປັນພໍ່ແມ່ພັນ. ສະນັ້ນ ສາມາດເວົ້າໄດ້ວ່າ ຄອບຄົວທ່ານບຸນທະວີ ເປັນຄອບຄົວໜຶ່ງທີ່ມີຄວາມບຸກບືນ, ສາມາດເປັນແບບຢ່າງໃຫ້ແກ່ຄອບຄົວອື່ນຢູ່ໃນບ້ານ ແລະ ບ້ານອື່ນໆ ອີກດ້ວຍ.




## ສະຫຼຸບຕີລາຄາ ຜົນການລົງຕິດຕາມ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ປ່າໄມ້ ຂອງຄະນະຊ່ຽວຊານ ທະນາຄານໂລກ

ໂດຍປະຕິບັດຕາມໜັງສືແຈ້ງການຂອງຫົວໜ້າຫ້ອງການທະນາຄານໂລກ ປະຈຳ ສປປ ລາວ ລົງວັນທີ 24 ພະຈິກ 2021 ຄະນະຊ່ຽວຊານ ຂອງທະນາຄານໂລກ ເຊິ່ງນຳໂດຍ ທ່ານ ເບັນຈາມິນ ເບີກຮາດ (Benjamin Burckhart) ເປັນຫົວໜ້າຄະນະ ແລະ ທ່ານ ນາງ ປາຕຣີກເຊຍ ແຟນັນເດ (Patricia Fernandes) ຮອງຫົວໜ້າຄະນະ ພ້ອມດ້ວຍ ອົງການເພື່ອການພັດທະນາ ແລະ ຮ່ວມມື ປະເທດສະວິດເຊີແລນ ກໍ່ໄດ້ເຂົ້າຮ່ວມ ເຊິ່ງໄດ້ເລີ່ມປະຕິບັດໜ້າທີ່ ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດໂຄງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ ຂອງກະຊວງກະສິກຳ ແລະ ປ່າໄມ້ ນັບແຕ່ ວັນທີ 1 ເຖິງ 10 ທັນວາ 2021 ຢູ່ໃນ 10 ແຂວງເປົ້າໝາຍ ໄດ້ສຳເລັດລົງຕາມລະດັບຄາດໝາຍ ຢ່າງໜ້າເພິ່ງພໍໃຈ.

ຈຸດປະສົງ ແລະ ຄາດໝາຍ ການມາຕິດຕາມປະເມີນຜົນໂຄງການຄັ້ງນີ້ເພື່ອຕີລາຄາປະເມີນຄວາມຄືບໜ້າຂອງວຽກງານໃນທ້າຍປີ 2021 ຢ່າງຮອບດ້ານ ໂດຍສະເພາະແມ່ນຮູບແບບ ແລະ ວິທີການຈັດຕັ້ງປະຕິບັດໂຄງການຢູ່ໃນເງື່ອນການລະບາດຂອງພະຍາດໂຄວິດ 19 (Covid-19);ກິດຈະກຳປັບປຸງຊີວິດການເປັນຢູ່ ທີ່ຕິດພັນກັບກິດຈະກຳດ້ານໂພຊະນາການ; ການພັດທະນາລະບົບຖານຂໍ້ມູນຕິດຕາມປະເມີນຜົນ ເພື່ອສະໜອງຂໍ້ມູນລາຍງານໃຫ້ຖືກຕ້ອງຕາມຄວາມເປັນຈິງ;ນອກຈາກນີ້ ກໍ່ເພື່ອຕິດຕາມປະເມີນເບິ່ງຮູບແບບການຈັດຕັ້ງປະຕິບັດແຜນງານໜຶ່ງດຽວດ້ານໂພຊະນາການ ທີ່ມີຫຼາຍຂະແໜງການເຂົ້າຮ່ວມ ຢູ່ 4 ແຂວງພາກເໜືອ ແລະ ຈຸດປະສົງສຸດທ້າຍແມ່ນເພື່ອປະເມີນເບິ່ງ ວຽກງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ທີ່ມີສ່ວນພົວພັນກັບກິດຈະການຂອງໂຄງການກຳລັງດຳເນີນຢູ່ປະຈຸບັນ.

ການຕິດຕາມປະເມີນຜົນກິດຈະການ ໂຄງການໃນຄັ້ງນີ້ ໄດ້ດຳເນີນໃນຮູບແບບອອນລາຍທັງໝົດເຊິ່ງທາງຄະນະປະເມີນຜົນຂອງທະນາຄານໂລກ, ອົງການເພື່ອການພັດທະນາ ແລະ ຮ່ວມມື ປະເທດສະວິດເຊີແລນ ແລະ ຄະນະຮັບຜິດຊອບໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ ກໍ່ໄດ້ດຳເນີນປະຊຸມ ແລະ ສະໜອງຂໍ້ມູນ ຕາມທີ່ຄະນະປະເມີນຜົນຕ້ອງການຢ່າງຄົບຖ້ວນ.

ປະຈຸບັນ ໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ ຂອງກະຊວງກະສິກຳ ແລະ ປ່າໄມ້ ກຳລັງຈັດຕັ້ງປະຕິບັດຢູ່ໃນພື້ນທີ່ 10 ແຂວງເປົ້າໝາຍ, ເຊິ່ງໃນນັ້ນ ມີ 4 ແຂວງຄື: ຜົ້ງສາລີ, ຫົວພັນ, ອຸດົມໄຊ ແລະ ຊຽງຂວາງ ແມ່ນເຂົ້າຮ່ວມຈັດຕັ້ງປະຕິບັດແຜນງານໜຶ່ງດຽວດ້ານໂພຊະນາການ ທີ່ມີຫຼາຍຂະແໜງການເຂົ້າຮ່ວມ ໂດຍການໃຫ້ທຶນເພີ່ມຕື່ມໄລຍະທີ 3 ຈາກທະນາຄານໂລກ ມູນຄ່າ 22,5 ລ້ານໂດລາສະຫະລັດ ກວມເອົາ 12 ເມືອງ ແລະ 465 ບ້ານເປົ້າໝາຍ, ໄລຍະຈັດຕັ້ງປະຕິບັດ ແຕ່ປີ 2020 ເຖິງ ປີ 2024; ໃນ 6 ແຂວງເປົ້າໝາຍຄື: ແຂວງຫຼວງນ້ຳທາ, ຫຼວງພະບາງ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ແຂວງອັດຕະປື ປະກອບມີ 23 ເມືອງ ແລະ 23 ບ້ານເປົ້າໝາຍ ກຳລັງຈັດຕັ້ງປະຕິບັດ 53 ໂຄງການຍ່ອຍ ເປັນໂຄງການລົງທຶນຂອງລັດ ມູນຄ່າ

13 ຕື້ກີບ ແລະ ທຶນສົມທົບຈຳນວນ 395.200 ໂດລາສະຫະລັດ ຈາກອົງການເພື່ອການພັດທະນາ ແລະ ຮ່ວມມືປະເທດສະວິດເຊີແລນສຳລັບການຈັດຕັ້ງປະຕິບັດວຽກງານໂຄງການ ໃນປີ 2021.

ກິດຈະກຳທີ່ໄດ້ຮັບການປະເມີນຜົນຄັ້ງນີ້ປະກອບມີ (1) ກິດຈະການປັບປຸງຊີວິດການເປັນຢູ່ ທີ່ຕິດພັນກັບການສ້າງຕັ້ງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ; ການສະໜອງຕົ້ນທຶນ ແລະ ການສ້າງຕັ້ງກຸ່ມອອມຊັບ ແລະ ສິນເຊື່ອຊ່ວຍເຫຼືອກັນ; (2) ກິດຈະກຳສົ່ງເສີມໂພຊະນາການ ໃຫ້ເດັກນ້ອຍອາຍຸລຸ່ມ 2 ປີລົງມາ, ແມ່ລ້ຽງລູກ ແລະ ແມ່ຖືພາມານ ທີ່ເປັນກຸ່ມ ບຸລິມະສິດ ເຂົ້າຮ່ວມກິດຈະກຳປຸງແຕ່ງອາຫານ, ການເຮັດສວນຄົວ ແລະ ໃຫ້ຄວາມຮູ້ດ້ານການເບິ່ງແຍງລ້ຽງລູກ ພ້ອມທັງການປ່ຽນແປງດ້ານພຶດຕິກຳ ການກິນຢູ່ໃຫ້ຖືກຕ້ອງ; (3) ປະເມີນວຽກງານປົກປ້ອງດ້ານສັງຄົມ ແລະ ສິ່ງແວດ ລ້ອມ ທີ່ເກີດຂຶ້ນໃນລະຫວ່າງການດຳເນີນຈັດຕັ້ງປະຕິບັດໂຄງການຍ່ອຍ;(4)ປະເມີນວຽກງານການພັດທະນາ ແລະ ສ້າງຖານຂໍ້ມູນຂອງໂຄງການໃຫ້ເປັນລະບົບ ເພື່ອສະດວກໃນການເຂົ້າເຖິງຂໍ້ມູນ, ການຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນ ພ້ອມທັງການຮັບເອົາຄຳສະເໜີ, ຄຳຊົມເຊີຍ ແລະ ການຕຳນິສິ່ງຂາວ ໃຫ້ທວງທັນເວລາ ແລະ ຕອບສະໜອງຂໍ້ມູນ ຕາມຕົວຊີ້ວັດຕ່າງໆຂອງໂຄງການກຳນົດໄວ້ ເພື່ອການລາຍງານ; (5) ປະເມີນວຽກງານບໍລິຫານໂຄງການ ນັບທັງການນຳໃຊ້ງົບປະມານ ເຂົ້າໃນກິດຈະກຳຕ່າງໆ ຕາມແຜນທີ່ກຳນົດໄວ້.

ການຕິດຕາມປະເມີນຜົນກິດຈະກຳ ຂອງໂຄງການຄັ້ງນີ້ ໄດ້ດຳເນີນ ເປັນເວລາ 10 ວັນຕິດຕໍ່ກັນ ຕາມວາລະທີ່ກຳນົດໄວ້ ແລະ ໄດ້ສຳເລັດລົງ ດ້ວຍການຈັດກອງປະຊຸມສະຫຼຸບຕີລາຄາປະເມີນຜົນການຈັດຕັ້ງປະຕິບັດໂຄງການ ໃນຄັ້ງວັນທີ 10 ທັນວາ 2021 ໂດຍໄດ້ຮັບກຽດເປັນ ປະທານກອງປະຊຸມ ຂອງທ່ານ ປະລິນຍາເອກ ເພັດ ພົມພິພັກ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແລະ ການເປັນປະທານຮ່ວມຂອງທ່ານ ນາງ ວຽງສະໄໝ ສຣິດທິຣາດ, ເຈົ້າໜ້າທີ່ອາວຸໂສ ຫ້ອງການທະນາຄານໂລກ ແລະ ການໃຫ້ກຽດເຂົ້າຮ່ວມ ຂອງທ່ານ ນາງ ໄອເຣລີ ຣິກເຣຕີ, ຫົວໜ້າແຜນງານດ້ານການປົກຄອງ ແລະ ມີສວນຮ່ວມຂອງປະຊາຊົນ ຕາງໜ້າໃຫ້ອົງການ ເພື່ອການພັດທະນາ ແລະ ຮ່ວມມື ປະເທດສະວິດເຊີແລນ; ນອກນີ້ ຍັງມີບັນດາຊ່ຽວຊານ, ວິຊາການຫຼັກແຫຼ່ງຂອງສາມຝ່າຍເຂົ້າຮ່ວມທັງໝົດ 60 ກວ່າທ່ານ.

ໃນກອງປະຊຸມ ປະທານ ໄດ້ກ່າວຕ້ອນຮັບ ຄະນະຈາກທະນາຄານໂລກ ແລະ ຈາກອົງການເພື່ອການພັດທະນາ ແລະຮ່ວມມືຂອງປະເທດສະວິດເຊີແລນຢ່າງເປັນທາງການ ແລະ ໄດ້ຮັບຟັງການລາຍງານ ຜົນຂອງການຕິດຕາມປະເມີນຜົນ ວຽກງານໂຄງການ ຈາກທ່ານເບັນຈາມິນ ເບີກຣາດ, ຫົວໜ້າຄະນະປະເມີນຜົນ ເຊິ່ງໄດ້ຕີລາຄາເຖິງການຈັດຕັ້ງປະຕິບັດກິດຈະກຳໂຄງການໃນໄໝ່ງປີຜ່ານມາ ໂດຍສະເພາະແມ່ນຄວາມຄືບໜ້າທຽບໃສ່ການປະເມີນຜົນຄັ້ງຫຼ້າສຸດໃນ ເດືອນ ມິຖຸນາ 2021 ເຫັນວ່າ ໄດ້ຮັບໝາກຜົນເປັນໜ້າເພິ່ງພໍໃຈ, ບັນລຸໄດ້ຕາມລະດັບຄາດໝາຍ ແລະ ຕົວຊີ້ວັດຕ່າງໆທີ່ໂຄງການກຳນົດໄວ້.

ໃນກອງປະຊຸມສະຫຼຸບຕີລາຄາປະເມີນຜົນໂຄງການຄັ້ງນີ້ ທ່ານ ນາງວຽງສະໄໝ ສະຣິດທິຣາດ ກໍ່ໄດ້ຕີລາຄາສູງເຖິງການ ພົວພັນຮ່ວມມື ຂອງສາມຝ່າຍ ລະຫວ່າງທະນາຄານໂລກ, ອົງການເພື່ອການພັດທະນາ ແລະ ຮ່ວມມືຂອງປະເທດສະວິດເຊີແລນ ແລະ ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ມີການເສີມຂະຫຍາຍດີຂຶ້ນ ຫຼາຍກວ່າເກົ່າ ແລະ ຍັງໄດ້ກ່າວຢ້ຳເຖິງຈຸດປະສົງ ແລະ ເປົ້າໝາຍຂອງການຕິດຕາມປະເມີນຜົນຄັ້ງຂອງທະນາຄານໂລກ ພ້ອມທັງກາວຍ້ອງຍໍຊົມເຊີຍ ຕໍ່ກັບການຈັດຕັ້ງປະຕິບັດໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ ໃນໄລຍະທີ່ ສປປ ລາວ ກໍ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ ໂຄວິດ-19 ໄດ້ບັນລຸຜົນຕາມຄາດໝາຍ; ທ່ານ ຍັງໄດ້ຍົກໃຫ້ເຫັນເຖິງທິດທາງຂອບການຮ່ວມມື ລະຫວ່າງທະນາຄານໂລກ ແລະ ລັດຖະບານ ສປປ ລາວ ເຊິ່ງທະນາຄານໂລກໄດ້ມີແຜນສືບຕໍ່ໃຫ້ທຶນສະໜັບສະໜູນ ໃນຫຼາຍຂະແໜງການ ໃນໄລຍະແຕ່ປີ 2022 ເຖິງ ປີ 2026 ລວມທັງຂະແໜງການກະສິກຳ ແລະ ປ່າໄມ້ ເຊິ່ງໃນນັ້ນ ກໍ່ມີໂຄງການສືບຕໍ່ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກທີ່ໄດ້ມີການລະດົມແນວຄວາມຄິດ ເພື່ອກຳນົດຂອບວຽກພັດທະນາຊົນນະບົດແກ້ໄຂຄວາມທຸກຍາກໃນສົມປີຕໍ່ໜ້າ ແລະ ໄດ້ກຳນົດຊື່ໂຄງການ ໃນເບື້ອງຕົ້ນວ່າ: ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບສະພາບປ່ຽນແປງດິນຟ້າອາກາດໃນຊົນນະບົດ (Community Livelihood Enhancement and Resilience Project) ແລະ ມີຊື່ຫຍໍ້ວ່າ: CLEAR Project ເຊິ່ງມີແຜນຈະສືບຕໍ່ປຶກສາຫາລືກັນຢ່າງລະອຽດຕື່ມອີກ.

ນອກຈາກນັ້ນ, ທ່ານ ນາງ ໄອເຣລີ ຣິກເຣຕີ ຕາງໜ້າຂອງອົງການເພື່ອການພັດທະນາ ແລະ ຮ່ວມມືປະເທດສະວິດເຊີແລນ ກໍ່ໄດ້ມີຄຳເຫັນ ກາວຍ້ອງຍໍໃນຂອບການຮ່ວມມື ກັບທະນາຄານໂລກ ແລະ ກະຊວງກະສິກຳ ປ່າໄມ້ ເຊິ່ງກໍ່ມີຫຼາຍໂຄງການໄດ້ຮັບທຶນສະໜັບສະໜູນຈາກອົງການຂອງເພິ່ນ; ໃນນັ້ນ, ກໍ່ມີໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ ທີ່ໄດ້ຈັດຕັ້ງປະຕິບັດຮ່ວມກັບໂຄງການລົງທຶນຂອງລັດຢູ່ໃນ 6 ແຂວງ, 23 ເມືອງ, ມີ 53 ໂຄງການຍ່ອຍ ມີມູນຄ່າ 13 ຕື້ກີບ ແລະ ອົງການເພື່ອການພັດທະນາ ແລະ ຮ່ວມມືປະເທດສະວິດເຊີແລນ ກໍ່ໄດ້ສືບຕໍ່ໃຫ້ທຶນເພີ່ມຕື່ມອີກມູນຄ່າ 395.200 ໂດລາສະຫະລັດ ເຊິ່ງໂຄງການດັ່ງກ່າວມີແຜນຈັດຕັ້ງປະຕິບັດໃຫ້ສຳເລັດໃນທ້າຍປີ 2021 ນີ້; ທ່ານຍັງໄດ້ກ່າວຕື່ມວ່າ ການສະໜັບສະໜູນດ້ານງົບປະມານຈາກອົງການເພື່ອການພັດທະນາ ແລະ ຮ່ວມມືປະເທດສະວິດເຊີແລນ ຈະໄດ້ສິ້ນສຸດລົງໃນທ້າຍເດືອນ ມິຖຸນາ ປີ 2022 ຕາມແຜນການທີ່ກຳນົດໄວ້.

ໃນໄລຍະສຸດທ້າຍ ຂອງກອງປະຊຸມ ທ່ານ ປະລິນຍາເອກ ເພັດ ພົມພິພັກ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້,

ປະທານສະພາບໍລິຫານ ກອງທຶນຫຼຸດຜ່ອນຄວາມທຸກຍາກ ກໍ່ໄດ້ມີຄຳເຫັນຕີລາຄາສູງຕໍ່ກັບຜົນສຳເລັດດັ່ງກ່າວ ທີ່ສາມາດບັນລຸໄດ້ຕາມຄາດໝາຍ ແລະ ຕົວຊີ້ວັດຕ່າງໆ ທີ່ກຳນົດໄວ້; ວຽກງານຂອງໂຄງການໄດ້ປະກອບສ່ວນໂດຍກົງ ເຂົ້າໃນການຈັດຕັ້ງປະຕິບັດແຜນງານພັດທະນາຊົນນະບົດແກ້ໄຂຄວາມທຸກຍາກຂອງລັດຖະບານໃນໄລຍະຜ່ານມາ ກໍ່ຄືໂຄງການທີ່ກຳລັງຈັດຕັ້ງປະຕິບັດ ຢູ່ໃນປະຈຸບັນຂອງກະຊວງກະສິກຳ ແລະ ປ່າໄມ້; ທ່ານຍັງໄດ້ກ່າວຊົມເຊີຍຜົນງານ ການຮ່ວມມືລະຫວ່າງລັດຖະບານ ສປປ ລາວ, ທະນາຄານໂລກ ແລະ ອົງການເພື່ອການພັດທະນາ ແລະ ຮ່ວມມືປະເທດສະວິດເຊີແລນ ໃນໄລຍະຜ່ານມາ ແລະ ແຜນການສືບຕໍ່ໃຫ້ການສະໜັບສະໜູນໃນຕໍ່ໜ້າ ໂດຍສະເພາະແມ່ນແຜນການສະໜັບສະໜູນໂຄງການໃໝ່ຂອງທະນາຄານໂລກ ໃຫ້ກອງທຶນຫຼຸດຜ່ອນຄວາມທຸກຍາກ ທີ່ກຳນົດຊື່ເບື້ອງຕົ້ນວ່າ: CLEAR Project; ທ່ານໄດ້ເນັ້ນໜັກເຖິງທິດທາງໃໝ່ຂອງການພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ ແລະ ໂຄງການໃໝ່ ແມ່ນຕ້ອງໄດ້ສຸມໃສ່ຜະລິດເປັນສິນຄ້າ ສ້າງລາຍຮັບໃຫ້ຫຼາຍຂຶ້ນ, ສົ່ງເສີມການປຸງແຕ່ງ ສ້າງມູນຄ່າເພີ່ມ ສະໜອງສິນຄ້າຕາມຄວາມຕ້ອງການຂອງຕະຫຼາດ; ສົ່ງເສີມການຜະລິດ ສະບຽງອາຫານ ແລະ ໂພຊະນາການ; ຈັດຕັ້ງ ແລະ ປັບປຸງກຳລັງການຜະລິດ ໃຫ້ສາມາດປັບຕົວເຂົ້າກັບການປ່ຽນແປງ ສະພາບດິນຟ້າອາກາດ; ດຳເນີນການຜະລິດກະສິກຳສະອາດ, ເປັນມິດກັບສິ່ງແວດລ້ອມ ໄປຕາມທິດສີຂຽວ, ສະອາດ ແລະ ຍືນຍົງ; ສິ່ງສຳຄັນແມ່ນ ສ້າງຈິດສຳນຶກໃຫ້ຊຸມຊົນເປັນເຈົ້າຕົນເອງ, ກຸ່ມຕົນເອງ, ເພິ່ງຕົນເອງ, ເປັນເຈົ້າການເຂົ້າຮ່ວມຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ນຳໃຊ້ໝາກຜົນຂອງໂຄງການໃຫ້ມີປະສິດທິຜົນສູງ; ສຸດທ້າຍທ່ານໄດ້ຮຽກຮ້ອງ ມາຍັງທະນາຄານໂລກ ແລະ ອົງການເພື່ອການພັດທະນາ ແລະ ຮ່ວມມືປະເທດສະວິດເຊີນແລນ ຈົ່ງສືບຕໍ່ໃຫ້ການສະໜັບສະໜູນ ບັນດາ 10 ແຂວງເປົ້າໝາຍຂອງໂຄງການ ຕໍ່ໄປອີກ ເຊິ່ງເປັນແຂວງທີ່ມີອັດຕາຄວາມທຸກຍາກຫຼາຍ.





# ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງຢູ່ 6 ແຂວງ

ໂດຍ: ແສງອາລຸນ ພິລາຈັນ

ສຳລັບປີ 2021 ກອງທຶນຫຼຸດຜ່ອນຄວາມທຸກຍາກ(ທລຍ), ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ ຢູ່ 23 ເມືອງ ຂອງ 6 ແຂວງ (ຫຼວງນ້ຳທາ, ຫຼວງພະບາງ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື) ມາຮອດປະຈຸບັນ ການຈັດຕັ້ງປະຕິບັດໂຄງການຍ່ອຍ ທັງໝົດ 236 ໂຄງການ ແມ່ນສຳເລັດ100% ແລ້ວ 219 ໂຄງການ ຍັງບໍ່ທັນສຳເລັດ 17 ໂຄງການ ໃນນັ້ນ ແຂວງຫຼວງນ້ຳທາມີ 24 ໂຄງການ ສຳເລັດ100% ປະກອບມີ 23 ໂຄງການ ຍັງບໍ່ທັນສຳເລັດ 1 ໂຄງການ, ແຂວງຫຼວງພະບາງມີ 54 ໂຄງການສຳເລັດ100% ໝົດທຸກໂຄງການ, ແຂວງສະຫວັນນະເຂດມີ 64 ໂຄງການ ສຳເລັດ100% ປະກອບມີ 58 ໂຄງການ ຍັງບໍ່ທັນສຳເລັດ 6 ໂຄງການ, ແຂວງສາລະວັນມີ 32 ໂຄງການ ສຳເລັດ100% ປະກອບມີ ໂຄງການ ສຳເລັດ100% ປະກອບມີ 31 ໂຄງການ ຍັງບໍ່ທັນສຳເລັດ 1 ໂຄງການ ແລະ ແຂວງອັດຕະປືມີ 30 ໂຄງການ ສຳເລັດ100% ປະກອບມີ 29 ໂຄງການ ຍັງບໍ່ທັນສຳເລັດ 1 ໂຄງການ.

ໂດຍແບ່ງອອກເປັນແຕ່ລະຂະແໜງການດັ່ງນີ້:

ຂະແໜງກະສິກຳ ແລະ ປ່າໄມ້ ມີ 27 ໂຄງການ ສຳເລັດ 100% ມີ 23 ໂຄງການ ຍັງບໍ່ທັນສຳເລັດ 4 ໂຄງການ, ຂະແໜງໂຍທາທິການ ແລະ ຂົນສົ່ງມີ 80 ໂຄງການ ສຳເລັດ100% 77 ໂຄງການ ຍັງບໍ່ທັນສຳເລັດ 3 ໂຄງການ, ຂະແໜງສາທາລະນະສຸກມີ 5 ໂຄງການ ສຳເລັດ100% ປະກອບມີ 4 ໂຄງການ ຍັງບໍ່ທັນສຳເລັດ 1 ໂຄງການ, ຂະແໜງສຶກສາທິການ ແລະ ກິລາ ມີ 58 ໂຄງການ ສຳເລັດ 100% ປະກອບມີ 57 ໂຄງການ ຍັງບໍ່ທັນສຳເລັດ 1 ໂຄງການ, ຂະແໜງນ້ຳສະອາດ ແລະ ສຸຂະອະນາໄມ ມີ 66 ໂຄງການ ສຳເລັດແລ້ວ100%ມີ 58 ໂຄງການ ຍັງບໍ່ທັນສຳເລັດມີ 8 ໂຄງການ.



## ຄວາມເປັນເຈົ້າການ ຂອງກຸ່ມໂພຊະນາການ (ກພກ) ບ້ານຂວາງຄຳ, ເມືອງນາໝໍ້

ໂດຍ: ພອນຄຳ ແກ້ວວິໄຊ, ໂພຊະນາການຂັ້ນບ້ານ, ເມືອງນາໝໍ້

ໃນວັນທີ 9 ພະຈິກ 2021 ທາງຄະນະຮັບຜິດຊອບ ແລະ ສະມະຊິກກຸ່ມໂພຊະນາການ (ກພກ) ບ້ານຂວາງຄຳ, ເມືອງນາໝໍ້, ແຂວງອຸດົມໄຊ ໄດ້ຈັດກອງປະຊຸມ ກພກ ຂຶ້ນ ຊຶ່ງມີສະມາຊິກ ເຂົ້າຮ່ວມທັງໝົດ 92 ຄົນ, ໃນນັ້ນ ແມ່ຖືພາ 8 ຄົນ, ແມ່ລູກອ່ອນ 6 ຄົນ, ເດັກ 0-5 ເດືອນ 6 ຄົນ, ເດັກ 6-23 ເດືອນ 36 ຄົນ ແລະ ແມ່ຜູ້ດູແລເດັກ 36 ຄົນ.

ໃນກອງປະຊຸມຄັ້ງນີ້ ສະມາຊິກ ກພກ ໄດ້ພ້ອມກັນປຸງແຕ່ງອາຫານໃຫ້ແກ່ແມ່ຍິງຖືພາ, ແມ່ລູກອ່ອນ ແລະ ເດັກນ້ອຍ 6-23 ເດືອນ, ຊຶ່ງເປັນການຊ່ວຍເຮັດໃຫ້ຊຸມຊົນກໍຄືຜູ້ເປັນ ແມ່ຍິງ ແລະ ຜູ້ດູແລເດັກ ໄດ້ຮຽນຮູ້ກ່ຽວກັບອາຫານທີ່ມີໂພຊະນາການສຳລັບແມ່ ແລະ ເດັກຢ່າງຖືກຕ້ອງຕາມຫຼັກການ ໂດຍສະເພາະຕໍ່ການຈະເລີນເຕີບໂຕຂອງເດັກ ແລະ ຕໍ່ສຸຂະພາບຂອງແມ່ຖືພາ, ແມ່ລູກອ່ອນ. ນອກຈາກນັ້ນ, ແມ່ຫຼືຜູ້ດູແລເດັກຍັງໄດ້ຮຽນຮູ້ວິທີການນຳໃຊ້ເຄື່ອງບົດແປ້ງອາຫານທີ່ມີສ່ວນປະກອບຂອງເຂົ້າຈ້າວ ແລະ ຖົ່ວຂຽວເປັນວັດຖຸດິບຕົ້ນຕໍ ກ່ອນທີ່ຈະນຳໄປຕົ້ມເຂົ້າປຽກໃຫ້ແກ່ເດັກອາຍຸ 6-23 ເດືອນ. ວິທີການບົດແປ້ງດັ່ງກ່າວນີ້ ແມ່ນນະວັດຕະກຳໃໝ່ທີ່ ທລຍ ກຳລັງສົ່ງເສີມຢູ່ບັນດາບ້ານເປົ້າໝາຍໂຄງການ ເພື່ອຫຼຸດຜ່ອນເວລາໃນການກະກຽມອາຫານໃຫ້ແກ່ເດັກອາຍຸ 6-23 ເດືອນ ໄດ້ຫຼາຍສົມຄວນ ຊຶ່ງຈະເຮັດໃຫ້ເຂົາເຈົ້າມີເວລາໄປເຮັດວຽກອື່ນ.

# 23 ບ້ານເປົ້າໝາຍຂອງ ທລຍ ເມືອງຊຳໃຕ້ ໄດ້ຮັບເງິນຕົ້ນທຶນໝູນວຽນ 1 ຕື້ກວ່າກີບ

ໂດຍ: ສຸກລະກອນ ອຳພາວັນ, ຫົວໜ້າທີມ ທລຍ ເມືອງຊຳໃຕ້

ໃນລະຫວ່າງເດືອນສິງຫາ ເຖິງ ຕົ້ນເດືອນຕຸລາ ປີ 2021 ຜ່ານມາ ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ຊຳໃຕ້, ແຂວງຫົວພັນ ໄດ້ລົງຈັດພິທີມອບ-ຮັບເງິນຕົ້ນທຶນໝູນວຽນ ຈຳນວນ 1,065,360,000 ກີບ ໃຫ້ແກ່ 23 ບ້ານເປົ້າໝາຍ ທລຍ ຊຶ່ງໃຫ້ກຽດມອບທຶນໝູນວຽນແຕ່ລະບ້ານໂດຍ ທ່ານ ຄຽນທອງ ທຳບຸນໄຊ, ຮອງເຈົ້າເມືອງ ເມືອງຊຳໃຕ້, ຜູ້ຊີ້ນຳວຽກງານ ທລຍ; ທ່ານ ກອນໄທ ແກ້ວນະຄອນ, ຮອງຫົວຫນ້າພະແນກກະສິກຳ ແລະ ປ່າໄມ້ ແລະ ການເຂົ້າຮ່ວມເປັນສັກຂີພະຍານຂອງ ພະນັກງານຫ້ອງການທີ່ກ່ຽວຂ້ອງ, ທີມງານ ທລຍ ເມືອງຊຳໃຕ້, ອຳນາດການປົກຄອງບ້ານ, ພະນັກງານ ທລຍ ຂັ້ນບ້ານ ແລະ ສະມາຊິກກຸ່ມ ກຊກ ທັງໝົດ 965 ຄົນ, ຍິງ 914 ຄົນ (ເຜົ່າມົ້ງ, ເຜົ່າກຶມມຸ, ເຜົ່າລາວລຸ່ມ). ການມອບເງິນທຶນໝູນວຽນໃຫ້ແຕ່ລະບ້ານໃນຊຸດນີ້ ມີຈຸດປະສົງເພື່ອສະໜັບສະໜູນໃຫ້ສະມາຊິກກຸ່ມ ກຊກ ກູ້ຢືມໄປເຮັດກິດຈະກຳການປູກ-ການລ້ຽງ ໂດຍສະເພາະແມ່ນການລ້ຽງສັດປີກ, ລ້ຽງໝູ, ລ້ຽງແບ້, ຕ່ຳຫູກ, ລ້ຽງມ້ອນ ແລະອື່ນໆ ເພື່ອເພີ່ມພູນລາຍຮັບຂອງຄອບຄົວປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດມາດຖານພົ້ນທຸກ ຕາມດຳລັດ 348/ນຍ ໃຫ້ປະກົດຜົນເປັນຈິງ.ຊະນາການສຳລັບແມ່ ແລະ ເດັກຍ່າງ



# ສະມາຊິກ ກຸ່ມຊ່ວຍເຫຼືອກັນ (ກຊກ) ບ້ານກໍາໄຣ ໄດ້ຮັບການຝຶກອົບຮົມ ເຕັກນິກການລ້ຽງໝູລາດ

ໂດຍ: ທີມງານ ທລຍ ເມືອງກວນ

ໃນລະຫວ່າງວັນທີ 1-2 ກັນຍາ 2021 ຜ່ານມາ, ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ເມືອງກວັນ, ແຂວງ ຫົວພັນ ສົມທົບກັບຄູຝຶກຈາກຫ້ອງການກະສິກໍາແລະປ່າໄມ້ ເມືອງ 1 ທ່ານ ລົງຝຶກອົບຮົມເຕັກນິກການລ້ຽງໝູລາດ ແລະ ຕິດຕາມການທ້ອນເງິນຂອງສະມາຊິກກຸ່ມຊ່ວຍເຫຼືອກັນ (ກຊກ) ບ້ານກໍາໄຣ.

ບ້ານດັ່ງກ່າວເປັນບ້ານ ຊົນເຜົ່າມົ້ງ, ປະ ກອບມີ 61 ຄອບຄົວ, ພົນລະເມືອງທັງໝົດ 283 ຄົນ, ຍິງ 159 ຄົນ, ໃນນັ້ນ ມີກຸ່ມ ຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) 3 ກຸ່ມ, ສະມາຊິກ 45 ຄົນ, ຍິງ 38 ຄົນ.

ຈຸດປະສົງຂອງການຝຶກອົບຮົມໃນຄັ້ງນີ້ແມ່ນເພື່ອເປັນການສ້າງ ຄວາມເຂັ້ມແຂງໃຫ້ແກ່ສະມາຊິກ ກຊກ ໃນການຮຽນຮູ້ເຕັກນິກວິ ຊາການໃໝ່ໃນການລ້ຽງໝູລາດ ໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ເປັນການສົ່ງເສີມກິດຈະກໍາລ້ຽງສັດ ສ້າງລາຍຮັບໃຫ້ແກ່ ຄອບຄົວ.

ສໍາລັບການຝຶກອົບຮົມໃນເທື່ອນີ້ ໄດ້ນໍາເອົາຫົວຂໍ້ທີ່ສໍາຄັນ ມາສິດສອນໃຫ້ສະມາຊິກກຸ່ມ ເປັນຕົ້ນແມ່ນເຕັກນິກວິທີການສ້າງຄອກໝູ, ວິທີການຄັດເລືອກແນວພັນ, ວິທີການປະ ສົມພັນ, ວິທີການລ້ຽງ, ວິທີການເຮັດສູດອາຫານໝັກຈາກ ຢວກກ້ວຍ, ທີ່ໃຫ້ອາຫານ, ວິທີການປະສົມຢາວັກຊິນ ແລະ ວິທີການສັກຢາ. ໃນນັ້ນ ໄດ້ລົງເລິກພາກທິດສະດີ 50% ແລະ ພາກສາທິດປະຕິບັດຕົວຈິງ 50% ໂດຍສະເພາະ ແມ່ນການ ສາທິດເຮັດອາຫານໝັກຈາກຢວກກ້ວຍ ທີ່ເປັນວັດຖຸດິບຫາ ໄດ້ງ່າຍໃນຊຸມຊົນ ແລະ ວິທີການສັກຢາວັກຊິນປ້ອງກັນພະ ຍາດໝູ.

ພາຍຫຼັງໄດ້ຮັບການຝຶກອົບຮົມໃນຄັ້ງນີ້ແລ້ວ ຊາວບ້ານມີຄວາມ ຮູ້ໃນການລ້ຽງໝູລາດແບບຂັງຄອກ ຕາມຫຼັກວິຊາການ, ຮູ້ວິ ທີການເຮັດສູດອາຫານດ້ວຍການ ນໍາໃຊ້ວັດຖຸດິບທີ່ຫາໄດ້ ງ່າຍໃນທ້ອງຖິ່ນ ແລະ ຮູ້ວິທີການສັກຢາກັນພະຍາດໝູ.

ນອກຈາກການຝຶກອົບຮົມດ້ານເຕັກນິກວິຊາການແລ້ວ,ຍັງໄດ້ ນໍາພາສະມາຊິກກຸ່ມ ປຶກສາຫາລືກັນກ່ຽວກັບກິດຈະການ ການທ້ອນເງິນ, ເຊິ່ງບ້ານດັ່ງກ່າວສາມາດທ້ອນເງິນໄດ້ ສະສົມທັງໝົດ 2.700.000 ກີບ; ສະເພາະການທ້ອນ ເງິນໃນເດືອນກັນຍາ 2021 ປະຕິບັດໄດ້ 225.000 ກີບ ໂດຍປະຕິບັດຕາມລະບຽບການທ້ອນເງິນ ແມ່ນສະມາຊິກ ຜູ້ໜຶ່ງເອົາເງິນມາທ້ອນຜູ້ລະ 5.000 ກີບ ຕໍ່ເດືອນ.





## ການກໍ່ສ້າງໂຮງຮຽນອະນຸບານບ້ານຫາດພອນ ສໍາເລັດແລ້ວ 40%

ໂດຍ: ສອນ ວົງລໍຄໍາ, ບໍລິຫານການເງິນເມືອງປາກແຊງ

ບ້ານຫາດພອນ, ເມືອງປາກແຊງ, ແຂວງຫຼວງພະບາງ ເປັນບ້ານເຜົ່າລາວລຸ່ມ ແລະ ເຜົ່າກຶມມຸ, ປະກອບມີ 95 ຄອບຄົວ, ພົນລະເມືອງທັງໝົດ 539 ຄົນ (ຍິງ 255 ຄົນ), ແບ່ງເປັນຊົນເຜົ່າລາວລຸ່ມ ມີ 19 ຄອບຄົວ ແລະ 107 ຄົນ, ແລະ ຊົນເຜົ່າກຶມມຸ ມີ 76 ຄອບຄົວ ແລະ 432 ຄົນ. ໃນປີ 2021 ບ້ານດັ່ງກ່າວ ໄດ້ຮັບການສະໜັບສະໜູນການກໍ່ສ້າງໂຮງຮຽນອະນຸບານ ໂດຍທຶນສົມທົບຂອງລັດຖະບານລາວ ໂດຍຜ່ານກອງທຶນຫຼຸດຜ່ອນຄວາມທຸກຍາກ.

ໃນທ້າຍເດືອນຕຸລາ 2021 ຜ່ານມາ, ທ່ານ ອານຸສັກ ພອນສະຫວັນ, ຮອງເຈົ້າເມືອງ ເມືອງປາກແຊງ, ແຂວງຫຼວງພະບາງ ພ້ອມດ້ວຍຄະນະໄດ້ລົງຕິດຕາມກວດກາດ້ານເຕັກນິກ ໃນການກໍ່ສ້າງໂຮງຮຽນອະນຸບານ ບ້ານຫາດພອນ ຊຶ່ງໄດ້ຮັບຟັງການລາຍງານຄວາມຄືບໜ້າຂອງການກໍ່ສ້າງ ຈາກຜູ້ຕາງໜ້າບໍລິສັດຜູ້ຮັບເໝົາກໍ່ສ້າງ ແລະ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ວ່າ: ໂຮງຮຽນອານຸບານ ບ້ານຫາດພອນ ຫຼັງໃໝ່ນີ້ ໄດ້ເລີ່ມການກໍ່ສ້າງຕັ້ງແຕ່ວັນທີ 25 ກັນຍາ 2021, ມີມູນຄ່າການກໍ່ສ້າງທັງໝົດ 340 ລ້ານກວ່າກີບ, ໃນນັ້ນ ຊຸມຊົນປະກອບສ່ວນ 25 ລ້ານກວ່າກີບ. ການກໍ່ສ້າງໂຮງຮຽນປະຖົມຫຼັງດັ່ງກ່າວ ມີຂະໜາດ 11 x 26 ແມັດ, ໂຄງສ້າງເຮັດດ້ວຍເບຕົງເສີມເຫຼັກ, ຝາກໍ່ດ້ວຍດິນບ່ອກ ແລະ ມຸງດ້ວຍສັງກະສີອາລຸ້ຍຊິງ, ມີ 3 ຫ້ອງຮຽນ, ມີ 2 ຫ້ອງນໍ້າ ແລະ ເຄື່ອງເຟີນີເຈີ. ມາເຖິງປະຈຸບັນ ການກໍ່ສ້າງອາຄານຮຽນ ມີຄວາມຄືບໜ້າສໍາເລັດແລ້ວ 40% ໂດຍສໍາເລັດການກໍ່ຝາດິນບ່ອກ ແລະ ຄານຫຼັງຄາ ແລະ ຄາດວ່າຈະໃຫ້ສໍາເລັດຕາມແຜນໃນທ້າຍເດືອນທັນວາ 2021 ນີ້.



## ການກໍ່ສ້າງໂຮງຮຽນປະຖົມ 2 ຫ້ອງ ບ້ານ ນ້ຳຈິລິ, ກຸ່ມບ້ານນ້ຳແພສຳເລັດແລ້ວ 10%

ໂດຍ:ບົວທອນ ພູນສະຫວ່າງ, ບໍລິຫານການເງິນ ເມືອງວຽງພູຄາ

ບ້ານນ້ຳຈິລິ, ຕັ້ງຢູ່ຫ່າງຈາກຕົວເມືອງວຽງພູຄາ ປະມານ 23 ກິໂລແມັດ ປະກອບມີ 125 ຄອບຄົວ ມີຈຳນວນພົນລະເມືອງທັງໝົດ 577 ຄົນ, ຍິງ 287 ຄົນ ມີ 3 ຊົນເຜົ່າຄື: ເຜົ່າກຶມມຸ, ລະເມດ ແລະ ໄທດຳ ອາຊີບຕົ້ນຕໍແມ່ນເຮັດໄຮ່, ເຮັດນາ, ປຸກຝັງລ້ຽງສັດ ແລະ ເກັບເຄື່ອງປ່າຂອງດົງຂາຍເປັນ ອາຊີບສຳຮອງເພື່ອຫາລາຍໄດ້ເສີມ.

ບ້ານ ນ້ຳຈິລິ ເປັນບ້ານໜຶ່ງທີ່ໃຫຍ່ ແລະ ຕັ້ງຢູ່ຈຸດໃຈກາງເຊິ່ງມີບັນດາບ້ານຢູ່ອ້ອມຂ້າງເຊັ່ນ: ບ້ານ ນ້ຳແພ, ບ ດອນໃໝ່,ບ ນ້ຳຂອງນ້ອຍ, ບ ພູລັນໃຕ້ ທີ່ໄດ້ຮັບຜົນປະໂຫຍດ ຈາກໂຄງການ ດັ່ງກ່າວອີກດ້ວຍ.

ຜ່ານມາບ້ານນ້ຳຈິລິ ກໍ່ໄດ້ຮັບທຶນຊ່ວຍເຫຼືອຈາກ ກອງທຶນຫຼຸດຜ່ອນຄວາມທຸກຍາກ(ທລຍ) ໃນໄລຍະທີ 2 ຍ້ອນຈຳນວນນັກຮຽນເພີ່ມຂຶ້ນຫຼາຍຢ່າງຕໍ່ເນື່ອງ ໂຮງຮຽນທີ່ມີຢູ່ບໍ່ສາມາດຮອງຮັບຈຳນວນນັກຮຽນໄດ້ໝົດບ້ານດັ່ງກ່າວ ຈຶ່ງສະເໜີເອົາການກໍ່ສ້າງໂຮງຮຽນປະຖົມເປັນບຸລິມະສິດທຳອິດ ແລະ ໄດ້ເລີ່ມລົງມືກໍ່ສ້າງໃນຕົ້ນເດືອນພະຈິກ 2021; ຂະໜາດຂອງການກໍ່ສ້າງໂຮງຮຽນປະຖົມດັ່ງກ່າວແມ່ນ 14 x 8 ແມັດ, ປະກອບມີ 2 ຫ້ອງຮຽນ (ສາມາດຮັບຮອງນັກຮຽນໄດ້ 60 ກ່ວາຄົນ), ເຟີນີເຈີຄົບຊຸດ, ເສົາທຸງ ແລະ ຫ້ອງນ້ຳ 2 ຫ້ອງ, ລວມມູນຄ່າການກໍ່ສ້າງທັງໝົດ ຈຳນວນ 301 ລ້ານກວ່າກີບ ຊຶ່ງເປັນທຶນສົມທົບລັດຖະບານ ຜ່ານກອງທຶນຫຼຸດຜ່ອນຄວາມທຸກຍາກ ໃນນັ້ນ ຊຸມຊົນປະກອບສ່ວນວັດຖຸທ້ອງຖິ່ນທີ່ຫາໄດ້ ແລະ ແຮງງານ ຄິດເປັນເງິນ 14 ລ້ານກວ່າກີບ.

ໂຄງການດັ່ງກ່າວໄດ້ເລີ່ມລົງມືຈັດຕັ້ງປະຕິບັດໃນຕົ້ນເດືອນພະຈິກ 2021 ເປັນຕົ້ນມາ ເຊິ່ງມາຮອດປະຈຸບັນສຳເລັດແລ້ວປະມານ 10% ຂອງໜ້າວຽກ. ໃນອາທິດຜ່ານມາທາງທີມງານ ທລຍ ແຂວງ, ທລຍ ເມືອງ ຮ່ວມກັບຂະແໜງການກ່ຽວຂ້ອງຂັ້ນເມືອງໂດຍສະເພາະແມ່ນ ຫ້ອງການສຶກສາທິການ ແລະ ກິລາເມືອງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງໄດ້ລົງຕິດຕາມຊຸກຍູ້ເປັນແຕ່ລະຊ່ວງໄລຍະເພື່ອໃຫ້ການຈັດຕັ້ງປະຕິບັດທ່ວງທັນກັບເວລາທີ່ໄດ້ກຳນົດໄວ້ໃນທ້າຍເດືອນທັນວາ 2021.

- **ທີ່ຕັ້ງ ແລະ ພາລະບົດບາດຂອງ ທລຍ**

ກອງທຶນຫຼຸດຜ່ອນຄວາມທຸກຍາກ ຊື່ຫຍໍ້ວ່າ "ທລຍ" ແມ່ນການຈັດຕັ້ງໜຶ່ງພາຍໃຕ້ຄວາມພະຍາຍາມຂອງລັດຖະບານເພື່ອໃຫ້ເປັນໂຄງການລິເລີ່ມຂອງລັດຖະບານເພື່ອປະກອບສ່ວນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ຈົນກ້າວເຖິງການຫຼຸດພົ້ນອອກຈາກຄວາມທຸກຍາກໃນຂອບເຂດທົ່ວປະເທດ ທັງເປັນການຜັນຂະຫຍາຍມະຕິຂອງພັກ ແລະ ລັດຖະບານ ໂດຍການກະຈາຍອຳນາດລົງສູ່ທ້ອງຖິ່ນ ເປັນຕົ້ນແມ່ນການມີສ່ວນຮ່ວມຂອງປະຊາຊົນໃນການຕັດສິນໃຈຕໍ່ການພັດທະນາຢູ່ທ້ອງຖິ່ນຂອງເຂົາເຈົ້າ, ທັງເປັນ ການປະຕິບັດພັນທະສາກົນຂອງຕົນໃນການປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດຄາດໝາຍສະຫັດສະຫວັດ ເພື່ອການພັດທະນາໃນປີ 2015, ພ້ອມທັງປະກອບເຂົ້າໃນວຽກງານ"ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ" ເພື່ອເຮັດໃຫ້ປະເທດເຮົາຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາ ໃນປີ2020.

ກອງທຶນຫຼຸດຜ່ອນຄວາມທຸກຍາກໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 73/ນຍ, ສະບັບລົງວັນທີ31 ພຶດສະພາ2002, ອີງຕາມດຳລັດດັ່ງກ່າວແຕ່ປີ2003ຫາ2006ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ເພື່ອປະກອບສ່ວນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກ ຕາມກອງປະຊຸມໃຫຍ່ຄັ້ງທີ VII ຂອງສູນກາງພັກ, ຈາກນັ້ນ ໄດ້ມີການດັດແກ້ມາເປັນດຳລັດ ເລກທີ 222/ນຍ ລົງວັນທີ 29 ກັນຍາ 2006 ແລະ ທລຍ 2 ໄດ້ອີງໃສ່ດຳລັດເລກທີ 10/ນຍ, ລົງວັນທີ 10 ມັງກອນ 2012, ອີງຕາມດຳລັດທີ່ໄດ້ດັດແກ້ດັ່ງກ່າວ, ແຕ່ປີ 2007 ຫາ 2016, ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ມີຫ້ອງການສູນກາງຢູ່ສຳນັກງານນາຍົກ ລັດຖະມົນຕີ ແລະ ທລຍ ໄລຍະທີ 3 ແມ່ນອີງຕາມດຳລັດ ເລກທີ 99/ນຍ (ລົງວັນທີ 9 ມີນາ 2017) ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້, ທລຍ ເປັນກົນຈັກທົ່ວໜ່ວຍວິຊາການລະດັບ 2 ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ນັບແຕ່ປີ 2017 ເປັນຕົ້ນມາ.

- **ພື້ນທີ່ການເຄື່ອນໄຫວວຽກງານ ທລຍ**

ທລຍ ໄລຍະ 1: ປີ 2003-2011 (8 ປີ)ໄດ້ເຄື່ອນໄຫວວຽກງານຢູ່ 8 ແຂວງ (ຫຼວງນ້ຳທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ,ຈຳປາສັກ, ເຊກອງ ແລະ ອັດຕະປື, ສະເພາະ ແຂວງອັດຕະປືແມ່ນ ເຂົ້າປີ 2011), 28 ເມືອງທຸກຍາກ, 309 ກຸ່ມບ້ານ, 2.185 ບ້ານ ແລະ ກວມເອົາປະຊາກອນຫຼາຍກວ່າ 909.000 ກວ່າຄົນ.

ທລຍ ໄລຍະທີ 2: ແຕ່ປີ 2012-2016 (5 ປີ) ໄດ້ກວມເອົາ 10 ແຂວງ, 42 ເມືອງທຸກຍາກ, 278 ກຸ່ມບ້ານ 1.951 ບ້ານ ແລະ ກວມເອົາປະຊາກອນ ຫຼາຍກວ່າ 891.000 ຄົນ. ແຂວງຈຳປາສັກ ໄດ້ຖືກ ຖອນອອກໃນປີ 2011 ແລະ ເພີ່ມແຂວງ ອຸດົມໄຊ, ຫຼວງພະບາງ ແລະ ຜົ້ງສາລີເຂົ້າຕື່ມໃນປີ 2012.

ທລຍ ໄລຍະ 3: ແຕ່ປີ 2017-2020 (4 ປີ) ໄດ້ກວມເອົາພື້ນທີ່ເປົ້າໝາຍ 10 ແຂວງ, 43 ເມືອງ, 263 ກຸ່ມບ້ານ, 1.820 ບ້ານ ແລະ ກວມເອົາປະຊາກອນຫຼາຍກວ່າ 850.000 ຄົນ.

ສະຫຼຸບລວມ: ປີ 2003 - 2020 ທລຍ ໄດ້ເຄື່ອນໄຫວວຽກງານທັງໝົດຢູ່ 11 ແຂວງຄື: ແຂວງຫຼວງນ້ຳທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ,ຈຳປາສັກ, ເຊກອງ, ອັດຕະປື, ອຸດົມໄຊ, ຜົ້ງສາລີ ແລະ ແຂວງຫຼວງພະບາງ. ກວມເອົາ 2.841 ບ້ານ, 413 ກຸ່ມບ້ານ, 55 ເມືອງ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 1.3 ລ້ານຄົນ

ທລຍ 3 ໄລຍະທຶນເພີ່ມຕື່ມ: 2020-2024 (4 ປີ) ໄດ້ກວມເອົາ 12 ເມືອງ, 465 ບ້ານ, 4 ແຂວງ (ຜົ້ງສາລີ, ຫົວພັນ, ອຸດົມໄຊ ແລະ ຊຽງຂວາງ)


**ຄະນະຮັບຜິດຊອບ**

ທ່ານ ນາງ ບົວລີ ໄຊຍະວົງ

ທ່ານ ທອງເງິນ ສະເດັດຕັນ

ທ່ານ ສົມສັກ ຈັນດາລາ

ທ່ານ ແສງເພັດ ວັນນະວົງ

ທ່ານ ປອ. ທັດທະຈັນ ພົມພັນທະວົງ

**ຄະນະບັນນາທິການ**

ທ່ານ ພັດນະຄອນ ຄັນທະມີໄຊ

ທ່ານ ປອ. ວົງປະພັນ ມະນີວົງ

**ອອກແບບ ແລະ ຈັດໜ້າ**

ທ່ານ ແສງອາລຸນ ພິລາຈັນ



**ຕິດຕໍ່ ແລະ ຕິດຕາມພວກເຮົາໄດ້ທີ່:**

ໂທ: 021 261 479 - 80, ອີເມວ: **info@prf.org**

ເວບໄຊ: **www.prflaos.org,** ເຟສບຸກ: **Prf Fund**


THE WORLD BANK
IBRD • IDA

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC